# ບົດລາຍງານເປັນລາຍລັກອັກສອນສຳລັບນັກຮຽນທີ່ຮຽນພາສາອັງກິດເປັນພາສາເພີ່ມເຕີມ ຫຼື ພາສາທ້ອງຖິ່ນ K-10

## ຂໍ້ມູນສຳລັບພໍ່ແມ່ ແລະ ຜູ້ດູແລ

ພໍ່ແມ່ແລະຜູ້ດູແລທີ່ຮັກແພງ

ທ່ານຈະໄດ້ຮັບບົດລາຍງານເປັນລາຍລັກອັກສອນສອງສະບັບຈາກໂຮງຮຽນຂອງລູກທ່ານໃນແຕ່ລະປີ. ບົດລາຍງານເຫຼົ່ານີ້ຈະຊ່ວຍໃຫ້ທ່ານເຂົ້າໃຈວ່າລູກຂອງທ່ານມີຄວາມຄືບໜ້າແນວໃດ ແລະ ໂຮງຮຽນຂອງທ່ານສະໜັບສະໜູນການຮຽນຮູ້ຂອງລູກທ່ານແນວໃດ. ແຕ່ລະບົດລາຍງານຈະສະແດງໃຫ້ເຫັນເຖິງຄວາມກ້າວໜ້າຂອງ ລູກຂອງທ່ານໃນທຸກວິຊາ.

### ບົດລາຍງານສຳລັບນັກຮຽນທີ່ຮຽນພາສາອັງກິດເປັນພາສາເພີ່ມເຕີມ ຫຼື ພາສາທ້ອງຖິ່ນ (English as an additional language or dialect (EAL/D))

ຖ້າລູກຂອງທ່ານກຳລັງຮຽນພາສາອັງກິດເປັນພາສາເພີ່ມເຕີມ ຫຼື ພາສາທ້ອງຖິ່ນ (EAL/D), ບົດລາຍງານຈະອະທິບາຍວິທີການພັດທະນາພາສາອັງກິດຂອງເຂົາເຈົ້າວ່າໄດ້ຮັບການພັດທະນາແບບໃດ ແລະ ແຈ້ງຄວາມກ້າວໜ້າຂອງການຮຽນພາສາອັງກິດຂອງລູກທ່ານ.  ສຳລັບນັກຮຽນ ປີ 1 ຂຶ້ນໄປ, ບົດລາຍງານຍັງຈະລະບຸລະຍະຄວາມສາມາດທາງພາສາອັງກິດປະຈຸບັນຂອງພວກເຂົາອີກດ້ວຍ. ລະຍະຕ່າງໆໄດ້ແກ່ ລະຍະເລີ່ມຕົ້ນ, ລະຍະພົ້ນເດັ່ນຂຶ້ນ, ລະຍະພັດທະນາ ຫຼື ລະຍະແຂງແຮງ. ກະລຸນາເບິ່ງໜ້າຕໍ່ໄປສຳລັບລາຍລະອຽດຂອງລະຍະເຫຼົ່ານີ້.

### ບົດລາຍງານສຳລັບນັກຮຽນທີ່ເຂົ້າມາໃໝ່ (EAL/D)

ຖ້າລູກຂອງທ່ານຢູ່ໃນຫຼັກສູດ EAL/D ແລະໄດ້ຢູ່ໃນໂຮງຮຽນຂອງອອສເຕຣເລັຍມາໄດ້ສີ່ເທີມ ຫຼື ໜ້ອຍກວ່າ, ບົດລາຍງານເປັນລາຍລັກອັກສອນຂອງລູກຂອງທ່ານອາດຈະປະກອບມີຄຳເຫັນກ່ຽວກັບຄວາມຄືບໜ້າຂອງພວກເຂົາໃນວິຊາທີ່ພວກເຂົາກຳລັງຮຽນແທນທີ່ຈະເປັນເກຣດ.

### ບົດລາຍງານສຳລັບນັກຮຽນ EAL/D ທີ່ເຂົ້າມາໃໝ່ໃນສູນຮຽນພາສາອັງກິດແບບເລັ່ງລັດ ຫຼື ໂຮງຮຽນມັດທະຍົມປາຍພາສາອັງກິດແບບເລັ່ງລັດ

ຖ້າລູກຂອງທ່ານໄດ້ລົງທະບຽນຮຽນຢູ່ໃນສູນພາສາອັງກິດແບບເລັ່ງລັດ ຫຼື ໂຮງຮຽນມັດທະຍົມປາຍພາສາອັງກິດແບບເລັ່ງລັດ, ທ່ານຈະໄດ້ຮັບບົດລາຍງານເປັນລາຍລັກອັກສອນກ່ຽວກັບຄວາມຄືບໜ້າຂອງພວກເຂົາໃນການຮຽນພາສາອັງກິດ. ນອກຈາກນັ້ນ, ບົດລາຍງານຈະສະແດງໃຫ້ເຫັນຄວາມຄືບໜ້າໃນທຸກວິຊາທີ່ຮຽນເພື່ອການກະກຽມຄວາມພ້ອມສຳລັບເຂົ້າໂຮງຮຽນມັດທະຍົມ.

| ຂັ້ນຕອນຄວາມສາມາດດ້ານພາສາອັງກິດ | |
|---|---|
| **ຂັ້ນເລີ້ມຕົ້ນ** | ນັກຮຽນໃນລະຍະເລີ່ມຕົ້ນແມ່ນກຳລັງເລີ້ມຮຽນພາສາອັງກິດ. ພວກເຂົາສາມາດເວົ້າໄດ້ໜຶ່ງ ຫຼື ຫຼາຍພາສານອກ ເໜືອໄປຈາກພາສາອັງກິດ ແລະ ອາດມີລະດັບຄວາມຮູ້ດ້ານການຂຽນທີ່ເໝາະສົມກັບອາຍຸໃນພາສາທຳອິດຂອງພວກເຂົາ. ນັກຮຽນເຫຼົ່ານີ້ກຳລັງເລີ້ມມີສ່ວນຮ່ວມກັບວຽກງານພາສາງ່າຍໆຂອງຫຼັກສູດ. |
| **ຂັ້ນພົ້ນເດັ່ນຂຶ້ນ** | ນັກຮຽນໃນລະຍະທີ່ພົ້ນເດັ່ນຂຶ້ນມີຄວາມຮູ້ພາສາອັງກິດເພີ່ມຂຶ້ນ. ນັກຮຽນເຫຼົ່ານີ້ສາມາດເວົ້າໄດ້ໜຶ່ງ ຫຼື ຫຼາຍພາສາ ລວມທັງພາສາອັງກິດຂັ້ນພື້ນຖານ ແລະ ມີຄວາມຮູ້ດ້ານການຂຽນພາສາອັງກິດເພີ່ມຂຶ້ນ. ນັກຮຽນເຫຼົ່ານີ້ສາມາດເຂົ້າຮ່ວມກິດຈະກຳໃນຫ້ອງຮຽນ ແລະ ມີສ່ວນຮ່ວມກັບການຮຽນຮູ້ໄດ້ເມື່ອມີການສອນພາສາທີ່ເໝາະສົມ ແລະມີເວລາເພີ່ມເຕີມເພື່ອເຮັດກິດຈະກຳໃນຫ້ອງຮຽນ. |
| **ຂັ້ນພັດທະນາ** | ນັກຮຽນໃນລະຍະການພັດທະນາສາມາດເວົ້າພາສາໜຶ່ງຫຼືຫຼາຍພາສາ ລວມທັງພາສາອັງກິດເພື່ອການສື່ສານ, ແລະມີຄວາມຮູ້ດ້ານການຂຽນພາສາອັງກິດໃນຂັ້ນພັດທະນາ. ນັກຮຽນເຫຼົ່ານີ້ມີສ່ວນຮ່ວມໃນກິດຈະກຳຕ່າງໆໃນຫ້ອງຮຽນແລະໂຮງຮຽນຢ່າງຫ້າວຫັນ ແລະ ສາມາດມີສ່ວນຮ່ວມກັບວຽກງານການຮຽນຮູ້ໄດ້ຢ່າງມີຜົນສຳເລັດຫຼາຍຂຶ້ນ. ພາສາທຳອິດຂອງພວກເຂົາຍັງສືບຕໍ່ເປັນການສະໜັບສະໜູນທີ່ມີຄຸນຄ່າໃນຂະນະທີ່ພວກເຂົາກຳລັງພັດທະນາການຄວບຄຸມໄວຍາກອນພາສາອັງກິດແລະການສ້າງຄຳສັບຂອງພວກເຂົາ. |
| **ຂັ້ນແຂງແຮງຂຶ້ນ** | ນັກຮຽນໃນລະຍະຂັ້ນແຂງແຮງຂຶ້ນສາມາດເວົ້າໄດ້ໜຶ່ງ ຫຼື ຫຼາຍພາສາ ລວມທັງພາສາອັງກິດແລະມີຄວາມຮູ້ທີ່ດີດ້ານການຂຽນພາສາອັງກິດ. ນັກຮຽນເຫຼົ່ານີ້ສາມາດມີສ່ວນຮ່ວມໃນກິດຈະກຳຕ່າງໆ ໃນຫ້ອງຮຽນ ແລະ ຂອງໂຮງຮຽນໄດ້ຢ່າງອິດສະລະ ແລະ ມີຄວາມສາມາດເພີ່ມຂຶ້ນໃນການນຳໃຊ້ພາສາອັງກິດເພື່ອເຂົ້າຮ່ວມໃນການຮຽນຮູ້ແລະປະສົບຜົນສຳເລັດໂດຍລວມ.  ພວກເຂົາເຂົ້າໃຈແລະຜະລິດຂໍ້ຄວາມທີ່ເວົ້າແລະຂຽນສຳລັບຈຸດປະສົງສະເພາະແຕ່ຍັງຕ້ອງການໃຫ້ມີການສຸມໃສ່ດ້ານສອນພາສາ ແລະຍຸດທະສາດທີ່ສະໜັບສະໜູນຜູ້ຮຽນ EAL/D, ເນື່ອງຈາກວ່າພາສາວິຊາການຂອງສາຂາວິຊາເພີ່ມຫຼາຍຂຶ້ນ. |

## ບໍລິການ ນາຍພາສາ ທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່ໂຮງຮຽນ. ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການຕິດຕໍ່ໂຮງຮຽນ, ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ທີ່ເບີ 131 450 ແລະ ຂໍເອົານາຍພາສາເປັນພາສາຂອງທ່ານ. ນາຍພາສາຈະໂທຫາໂຮງຮຽນ ແລະຈະຢູ່ໃນສາຍເພື່ອຊ່ວຍໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.